ປັດຈຸບັນນີ້, ທາງທະນາຄານຂອງພວກເຮົາກຳລັງຊອກຫາຜູ້ທີ່ມີຄວາມສົນໃຈ ແລະ ມີຄຸນສົມບັດເໝາະສົມກັບຕຳແໜ່ງດັ່ງນີ້:

1. ຮັບສະໝັກ ພໍ່ຄົວ ຫຼື ແມ່ຄົວ  ຈຳນວນ1 ທ່ານ
   - ບໍ່ຈຳກັດເພດ ເພາະເນັ້ນລົດຊາດການແຕ່ງອາຫານໃຫ້ແຊບ
   - ມີປະສົບການໃນການແຕ່ງກິນຈາກຮ້ານອາຫານໃດໜຶ່ງບໍ່ຕ່ຳກວ່າ 5ປີ (ຮ້ານອາຫານທີ່ມີຄວາມໜ້າເຊື່ອຖື)
   - ມີຄວາມສາມາດໃນການປຸງແຕ່ງໄດ້ຫຼາກຫຼາຍແບບ, ຫຼາຍປະເພດ
   - ມີຄວາມສະອາດ ແລະ ວ່ອງໄວ ມີຄວາມພິຖີພິຖັນ
   - ມີຄວາມຮູ້ດ້ານໂພສະນາການ
   - ມີຄວາມຮັກໃນການໃຫ້ບໍລິການ
   - ເປັນຄົນລະອຽດ - ຮອບຄອບ ແລະ ອົດທົນ
   - ສາມາດເຮັດວຽກເປັນທີມໄດ້

2. ຜູ້ຊ່ວຍ ພໍ່ຄົວ ຫຼື ແມ່ຄົວ  2 ທ່ານ
   - ບໍ່ຈຳກັດເພດ - ໄວ
   - ຮຽນຈົບສາຂາວິຊາຊີບການປຸງແຕ່ງອາຫານ
   - ມີປະສົບການໃນການເປັນຜູ້ຊ່ວຍແຕ່ງອາຫານຈາກຮ້ານອາຫານໃດໜຶ່ງບໍ່ຕ່ຳກວ່າ 2 ປີ (ຮ້ານອາຫານທີ່ມີຄວາມໜ້າເຊື່ອຖື)
   - ມີຄວາມສາມາດໃນການແຕ່ງຈານອາຫານ, ແກະສະຫຼັກ ແລະ ປຸງແຕ່ງອາຫານ
   - ມີຄວາມຄ່ອງແຄ້ວວ່ອງໄວໃນການກະກຽມການຈັດເມນູ
   - ມີຄວາມຮູ້ດ້ານໂພສະນາການ
   - ມີຄວາມຮັກໃນການໃຫ້ບໍລິການ
   - ຮັກຄວາມສະອາດ ລະອຽດອ່ອນ ມີຄວາມພິຖີພິຖັນ

ສົນໃຈສະໝັກ ແລະ ດາວໂຫຼດຟອມໄດ້ທີ່ www.phongsavanhbank.com ແລ້ວສົ່ງ E-mail ມາຫາພວກເຮົາທີ່ recruitment@phongsavanhbank.com ຫຼື ສາມາດຍື່ນແບບຟອມໄດ້ທີ່ ສຳນັກງານໃຫຍ່ ບ້ານ ພະຂາວ ເມືອງ ໄຊທານີ ແຂວງ ນະຄອນຫຼວງວຽງຈັນ.